ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງ ທຫລ ມອບເງິນເພື່ອຊ່ວຍເຫຼືອ ໃຫ້ຜູ້ປະສົບໄພນ້ຳຖ້ວມ



ໃນວັນທີ 19 ກັນຍາ 2022 ນີ້, ທີ່ສູນກາງສະຫະພັນແມ່ຍິງລາວ ຕາງໜ້າສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ນຳໂດຍ ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ. ພ້ອມດ້ວຍຄະນະບໍລິຫານງານແມ່ຍິງຮາກຖານ ທຫລ ໄດ້ໄປມອບວັດຖຸປັດໃຈເພື່ອຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ຖືກຜົນກະທົບຈາກໄພນ້ຳຖ້ວມໃນແຂວງຕ່າງໆໃນຂອບເຂດທົ່ວປະເທດ ລວມຈຳນວນເງິນມູນຄ່າ 25.000.000 ກີບ. ຕາງໜ້າຮັບໂດຍ ທ່ານ ນ. ສີລີກິດ ບຸບຜາ ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງລາວ.





ວັດຖຸປັດໃຈໃນຄັ້ງນີ້, ໄດ້ລະດົມຈາກບັນດາສະຫະພັນແມ່ຍິງຮາກຖານຈາກບັນດາກົມພາຍໃນ ທຫລ ເພື່ອຊ່ວຍເຫຼືອຜູ້ຖືກຜົນກະທົບໄພນ້ຳຖ້ວມໃນແຂວງຕ່າງໆ ໂດຍມອບຜ່ານສູນກາງສະຫະພັນແມ່ຍິງລາວ ເພື່ອນຳໄປມອບຕໍ່ໃຫ້ສະຫະພັນແມ່ຍິງບັນດາແຂວງທີ່ໄດ້ຮັບຜົນກະທົບ ແລະ ແຈກຢາຍໃຫ້ຜູ້ປະສົບໄພຕົວຈິງ, ທຫລ ຂໍເປັນສ່ວນໜຶ່ງໃນການຊ່ວຍເຫຼືອ ເພື່ອບັນເທົາທຸກຈາກໄພນ້ຳຖ້ວມໃນຄັ້ງນີ້. ເຊິ່ງທີ່ຜ່ານມາທາງສະຫະພັນແມ່ຍິງ ທຫລ ກໍໄດ້ລົມທົບທຶນຊ່ວຍເຫຼືອຕະຫຼອດມາ.

✍ຂ່າວ ແລະ ພາບ ໂດຍ: ນ. ທິດສະນາ ທຳມະວົງສິງ

*ໃຊ້ເງິນກີບຄືກຽດສັກສີຂອງຄົນລາວ*